ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຶນຈົດທະບຽນ ຫຼື ເງິນລົງທຶນຕໍ່າສຸດ ຂອງທະນາຄານທຸລະກິດ

ຮຽນ ທ່ານຜູ້ອ່ານ ທີ່ນັບຖື ແລະ ຮັກແພງ! ໂດຍສືບຕໍ່ໃນບົດຄວາມສະບັບກ່ອນ ໃນຫົວຂໍ້ກ່ຽວກັບຄວາມໝາຍ ແລະ ພາລະບົດບາດ ຂອງທະນາຄານທຸລະກິດ ເຮັດໃຫ້ເຮົາຮູ້ນຳກັນແລ້ວວ່າ ທະນາຄານທຸລະກິດແມ່ນສະຖາບັນການເງິນທີ່ດຳເນີນທຸລະກິດການທະນາຄານ ເປັນຕົ້ນການຮັບຝາກເງິນ, ການສະໜອງສິນເຊື່ອ, ການໃຫ້ບໍລິການຊຳລະ, ການຊື້ຂາຍເງິນຕາ ແລະ ການໃຫ້ບໍລິການອື່ນຕາມກົດໝາຍກຳນົດ. ສະນັ້ນ, ຄັ້ງນີ້ຜູ້ຂຽນຈະມາສືບຕໍ່ນຳສະເໜີກ່ຽວກັບທຶນຈົດທະບຽນ ຫຼື ເງິນລົງທຶນຕໍ່າສຸດຂອງທະນາຄານທຸລະກິດຕາມກົດໝາຍກຳນົດ ວ່າມີຄືແນວໃດ ເພື່ອເປັນຂໍ້ມູນໃຫ້ກັບນັກຮຽນຮູ້ ແລະ ຜູ້ທີ່ຕ້ອງການຢາກດຳເນີນທຸລະກິດການທະນາຄານ.

ອີງຕາມ ພາກທີ II ການຂໍອະນຸຍາດດຳເນີນທຸລະກິດການທະນາຄານ ແລະ ໂຄງປະກອບການຈັດຕັ້ງ, ໝວດທີ 1 ການຂໍອະນຸຍາດດຳເນີນທຸລະກິດການທະນາຄານ, ມາດຕາ 12 ທຶນຈົດທະບຽນ ຫຼື ເງິນລົງທຶນຕໍ່າສຸດ ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ, ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018 (ສະບັບປັບປຸງ) ໄດ້ກຳນົດວ່າ: ທະນາຄານທຸລະກິດທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດການທະນາຄານ ຕ້ອງມີທຶນຈົດທະບຽນຕໍ່າສຸດ 500 ຕື້ກີບ (ຫ້າຮ້ອຍຕື້ກີບ). ສຳລັບທະນາຄານທຸລະກິດຕ່າງປະເທດ ທີ່ສ້າງຕັ້ງສາຂາ ຢູ່ ສປປ ລາວ ຕ້ອງມີເງິນລົງທຶນຕໍ່າສຸດໃຫ້ສາຂາ 300 ຕື້ກີບ (ສາມຮ້ອຍຕື້ກີບ). ທຶນດັ່ງກ່າວແມ່ນສາມາດປະກອບເປັນເງິນ ແລະ ວັດຖຸ, ສຳລັບທຶນທີ່ປະກອບເປັນວັດຖຸຕ້ອງບໍ່ໃຫ້ເກີນ 10% ຂອງທຶນຈົດທະບຽນ ຫຼື ເງິນລົງທຶນ, ທຶນທີ່ເປັນວັດຖຸນັ້ນຕ້ອງໄດ້ຮັບການປະເມີນຈາກບໍລິສັດປະເມີນມູນຄ່າຊັບສິນ ຕາມການເຫັນດີຂອງທະນາຄານແຫ່ງ ສປປ ລາວ ແລະ ທຶນທີ່ເປັນວັດຖຸ ແມ່ນປະກອບດ້ວຍອະສັງຫາລິມະຊັບ ແລະ/ຫຼື ສັງຫາລິມະຊັບ ທີ່ນຳໃຊ້ເຂົ້າໃນການດຳເນີນທຸລະກິດຂອງທະນາຄານທຸລະກິດ ຊຶ່ງໃນນັ້ນອະສັງຫາລິມະຊັບຕ້ອງຕັ້ງຢູ່ ສປປ ລາວ ເທົ່ານັ້ນ ແລະ ທຶນຈົດທະບຽນ ຫຼື ເງິນລົງທຶນຕໍ່າສຸດ ໃນແຕ່ລະໄລຍະນັ້ນ ສາມາດປ່ຽນແປງໄດ້ຕາມການຕົກລົງຂອງລັດຖະບານ ແຕ່ບໍ່ໃຫ້ຫຼຸດຈຳນວນທີ່ໄດ້ກຳນົດໃນກົດໝາຍ.

ບັນດາທ່ານຜູ້ອ່ານ! ຄືຮູ້ນຳກັນແລ້ວວ່າ ທະນາຄານທຸລະກິດ ແມ່ນຢູ່ໃນບັນຊີປະເພດທຸລະກິດຄວບຄຸມ ໃນການດຳເນີນທຸລະກິດຕ້ອງມີທຶນຕາມກົດໝາຍກຳນົດ ຊຶ່ງສາມາດປະກອບທຶນເປັນວັດຖຸໄດ້ບໍ່ເກີນ 10% ແລະ ອີກ 90% ແມ່ນຕ້ອງປະກອບເປັນເງິນ ແລະ ເງິນດັ່ງກ່າວກໍ່ມາຈາກຜູ້ຖືຮຸ້ນທັງໝົດຂອງທະນາຄານ. ທຶນທີ່ເປັນວັດຖຸ ແລະ ເປັນເງິນ ຕ້ອງແບ່ງເປັນຮຸ້ນ ທີ່ມີມູນຄ່າເທົ່າກັນ. ໝາຍວ່າ: ເວລາສ້າງຕັ້ງທະນາຄານທຸລະກິດ ຕ້ອງໄດ້ມາເປີດບັນຊີນຳກົມບໍລິການ, ທະນາຄານແຫ່ງ ສປປ ລາວ ເປັນບັນຊີທຶນຈົດທະບຽນ ແລ້ວໂອນເງິນທຶນຈົດທະບຽນເຂົ້າບັນຊີດັ່ງກ່າວ. ສະນັ້ນ, ເມື່ອອີງຕາມກົດໝາຍທີ່ໄດ້ກຳນົດຄືດັ່ງກ່າວນັ້ນ ສາມາດເວົ້າໄດ້ວ່າ ທຶນຈົດທະບຽນແມ່ນມູນຄ່າຂອງຮຸ້ນທັງໝົດທີ່ຜູ້ຖືຮຸ້ນໄດ້ປະກອບ ເພື່ອສ້າງຕັ້ງທະນາຄານທຸລະກິດ ຊຶ່ງລວມເປັນເງິນ ແລະ ວັດຖຸ. ໃນນັ້ນທຶນທີ່ເປັນວັດຖຸບໍ່ໃຫ້ເກີນ 10% ຂອງທຶນຈົດທະບຽນທັງໝົດ ແລະ ເງິນລົງທຶນຕໍ່າສຸດ ແມ່ນເງິນທຶນຂອງທະນາຄານທຸລະກິດຕ່າງປະເທດ ລົງທຶນເພື່ອສ້າງຕັ້ງສາຂາຂອງຕົນ ຢູ່ ສປປ ລາວ ຊຶ່ງລວມມີທັງເງິນ ແລະ ວັດຖຸ. ຊຶ່ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ສາມາດນຳໃຊ້ທຶນຈົດທະບຽນ ຫຼື ເງິນລົງທຶນຂອງຕົນເຂົ້າໃນການກໍ່ສ້າງສຳນັກງານ, ປະກອບວັດຖຸເຕັກນິກ ແລະ ການເຄື່ອນໄຫວທຸລະກິດຂອງຕົນ ຕາມການອະນຸຍາດຂອງ ທະນາຄານແຫ່ງ ສປປ ລາວ. ການນຳໃຊ້ທຶນຈົດທະບຽນ ແລະ ເງິນລົງທຶນເຂົ້າໃນການກໍ່ສ້າງ ແລະ ປະກອບວັດຖຸເຕັກນິກນັ້ນແມ່ນບໍ່ໃຫ້ເກີນ 35% ຂອງທຶນຈົດທະບຽນ ຫຼື ເງິນລົງທຶນທັງໝົດ ຊຶ່ງໃນນັ້ນລວມທັງ 10% ຂອງທຶນທີ່ເປັນວັດຖຸ, ສ່ວນທີ່ເຫຼືອແມ່ນນຳໃຊ້ເຂົ້າໃນການສະໜອງສິນເຊື່ອ ໂດຍສະເພາະໂຄງການທີ່ມີປະສິດທິຜົນ.

ສຳລັບທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ສ້າງຕັ້ງກ່ອນກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບປຸງ ຕ້ອງໄດ້ເພີ່ມທຶນຈົດທະບຽນ ໃຫ້ຄົບ 500 ຕື້ກີບ ແລະ ເງິນລົງທຶນຕ່ຳສຸດໃຫ້ຄົບ 300 ຕື້ກີບ ພາຍໃນ 5 ປີ ນັບແຕ່ເດືອນກັນຍາ ປີ 2019 ເປັນຕົ້ນໄປ, ການເພີ່ມທຶນຈົດທະບຽນ ຂອງທະນາຄານທຸລະກິດສາມາດນຳແຫຼ່ງທຶນມາຈາກຜູ້ຖືຮຸ້ນເກົ່າ, ຄັງສະສົມຕ່າງໆ ຫຼື ຮູບການອື່ນ ເຊັ່ນ: ການຮັບຜູ້ຖືຮຸ້ນໃໝ່, ການລວມຕົວ ຫຼື ການປ່ຽນຮູບແບບວິສາຫະກິດ ຈາກບໍລິສັດຈຳກັດ ເປັນບໍລິສັດມະຫາຊົນ ໂດຍລະດົມທຶນໃນຕະຫຼາດຫຼັກຊັບກໍໄດ້.

ນັ້ນແມ່ນ ທຶນຈົດທະບຽນ ຫຼື ເງິນລົງທຶນຕ່ຳສຸດ ຂອງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ຕັ້ງຢູ່ ສປປ ລາວ ຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ໄດ້ກຳນົດ ແລະ ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ສ້າງຕັ້ງກ່ອນກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ຕ້ອງໄດ້ປະຕິບັດພັນທະ ຄືການເພີ່ມທຶນໃຫ້ຄົບ ຕາມກຳນົດເວລາ. ເພາະທຶນດັ່ງກ່າວນັ້ນ ແມ່ນເປັນປັດໃຈທີ່ສຳຄັນໃນການດຳເນີນທຸລະກິດ ຖ້າຫາກບໍ່ມີທຶນ ຫຼື ທຶນບໍ່ພຽງພໍແລ້ວ ກໍບໍ່ ສາມາດດຳເນີນທຸລະກິດໄດ້ ແລະ ທຶນດັ່ງກ່າວກໍແມ່ນເປັນສິ່ງຄ້ຳປະກັນເຖິງຄວາມເຂັ້ມແຂງໃນດ້ານເງິນທຶນຂອງທະນາຄານທຸລະກິດ ເອງ. ຫວັງວ່າບົດຄວາມດັ່ງກ່າວຈະເປັນຂໍ້ມູນຄວາມຮູ້ພື້ນຖານໃຫ້ກັບບັນດາທ່ານຜູ້ອ່ານ, ນັກຮຽນຮູ້ ຫຼື ຜູ້ທີ່ຕ້ອງການຢາກດຳເນີນທຸລະກິດດັ່ງກ່າວກໍສາມາດເອົາເປັນຂໍ້ມູນໄດ້.

**#ບົດຄວາມໂດຍ: ວັນນະສິດ ສິດທິລາດວົງສາ, ກົມນິຕິກຳ ທະນາຄານແຫ່ງ ສປປ ລາວ.**